**ມິຊຊາອາທິດທີ 28 ກຳນົດທຳມະດາ**

**ວັນທີ 9 ຕຸລາ 2022**



**ພຣະວໍລະສານໂດຍນັກບຸນລູກາ 17, 11-19**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປນະຄອນເຢລູຊາແລມ, ພຣະອົງໄດ້ເດີນທາງຜ່ານແຂວງຊາມາຣີແລະກາລິເລ. ພໍສະເດັດເຂົ້າໄປໃນບ້ານແຫ່ງໜຶ່ງກໍມີຄົນຂີ້ທູດສິບຄົນແລ່ນມາຫາພຣະອົງ. ພວກເຂົາຢຸດຢືນຢູ່ໄກໆແລ້ວຮ້ອງຂຶ້ນວ່າ: ໂອພຣະເຢຊູ, ພຣະອາຈານເຈົ້າ! ຂໍເມດຕາພວກຂ້ານ້ອຍທ້ອນ! ເມື່ອພຣະອົງທອດພຣະເນດພວກເຂົາແລ້ວ, ກໍກ່າວວ່າ: ພວກເຈົ້າຈົ່ງໄປສຳແດງຕົວຕໍ່ພຣະສົງ. ເມື່ອເວລາພວກເຂົາເດີນໄປນັ້ນ, ພວກເຂົາກໍໄດ້ຫາຍຈາກພະຍາດ.

ມີຄົນຜູ້ໜຶ່ງໃນພວກນັ້ນ, ເມື່ອເຫັນຕົວດີແລ້ວ, ກໍຫລົບຄືນມາພ້ອມທັງສັນລະເສີນພຣະເປັນເຈົ້າດ້ວຍສຽງດັງ. ແລະຂາບລົງແທບເທົ້າຂອງພຣະເຢຊູເຈົ້າເພື່ອຂອບພຣະຄຸນພຣະອົງ. ຄົນຜູ້ນີ້ແມ່ນຊາວຊາມາຣີອາ. ພຣະເຢຊູເຈົ້າຈຶ່ງກ່າວກັບເຂົາວ່າ: ບໍ່ໄດ້ຫາຍຈາກພະຍາດໝົດທັງສິບຄົນບໍ? ອີກເກົ້າຄົນນັ້ນຢູ່ໃສ? ເຫດໃດຈຶ່ງມີແຕ່ຄົນຕ່າງດ້າວຄົນນີ້ຜູ້ດຽວຫລົບມາຂອບພຣະຄຸນພຣະເປັນເຈົ້າ!

ແລ້ວພຣະອົງກ່າວກັບເຂົາວ່າ: ຈົ່ງລຸກຂຶ້ນເສຍ, ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າແລ້ວ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດທີ່ຜ່ານມາ, ວາຈາພຣະເຈົ້າໄດ້ກ່າວເຖິງຄວາມເຊື່ອ. ແລະຄວາມເຊື່ອນີ້ຕ້ອງການເຕີບໃຫຍ່ທະວີຂຶ້ນຜ່ານທາງຊີວິດຄວາມຮັກຂອງພວກເຮົາ.

ວັນນີ້, ວາຈາພຣະເຈົ້າກໍສືບຕໍ່ກ່າວເຖິງຄວາມເຊື່ອ. ແຕ່ເທື່ອນີ້, ແມ່ນຜ່ານທາງຄົນຕ່າງສາດສະໜາທີ່ໄດ້ຮັບການຮັກສາປິ່ນປົວຈາກພຣະເຢຊູເຈົ້າໃຫ້ຫາຍດີຈາກພະຍາດຂີ້ທູດ.

ຕອນຕົ້ນວາຈາພຣະເຈົ້າວັນນີ້, ນັກບຸນລູກາຜູ້ຂຽນພຣະວໍລະສານໄດ້ບອກພວກເຮົາໃຫ້ຮູ້ວ່າພຣະເຢຊູເຈົ້າກຳລັງເດີນທາງມຸ່ງສູ່ນະຄອນເຢລູຊາແລມ, ອັນແມ່ນເສັ້ນທາງສູ່ມະຫາທໍລະມານ, ການຕາຍແລະການກັບເປັນຄືນມາຂອງພຣະອົງ.

ບົນເສັ້ນທາງມຸ່ງສູ່ນະຄອນເຢລູຊາແລມນີ້, ພຣະເຢຊູເຈົ້າໄດ້ພົບກັບຄົນຂີ້ທູດສິບຄົນ. ພວກເຂົາຢືນຢູ່ແຕ່ໄກໆແລ້ວຮ້ອງຂຶ້ນວ່າ: “ໂອພຣະເຢຊູ, ພຣະອາຈານເຈົ້າ! ໂຜດເມດຕາພວກຂ້ານ້ອຍທ້ອນ!”. ການທີ່ຄົນຂີ້ທູດສິບຄົນນີ້ຢືນຢູ່ແຕ່ໄກໆນັ້ນ, ເພາະພວກເຂົາບໍ່ມີສິດຢູ່ຮ່ວມກັບຄົນອື່ນໃນສັງຄົມໄດ້, ຍ້ອນພະຍາດຂີ້ທູດ. ເພາະພະຍາດນີ້ບໍ່ພຽງແຕ່ເປັນໂລກຕິດຕໍ່ທາງຜິວໜັງເທົ່ານັ້ນ, ແຕ່ຍັງເປັນເຄື່ອງໝາຍແຫ່ງການມີມົນທິນ, ມີບາບ, ມີຄວາມເປື້ອນໝອງ. ດ້ວຍເຫດນີ້, ຄວາມເຈັບປວດໃນຊີວິດຂອງພວກເຂົາບໍ່ພຽງແຕ່ທາງຜິວໜັງເທົ່ານັ້ນ, ແຕ່ຍັງແມ່ນທາງດ້ານຈິດໃຈອີກດ້ວຍ. ດັ່ງນັ້ນ, ພວກເຂົາຈຶ່ງໄດ້ຮ້ອງຂໍຄວາມຊ່ວຍເຫລືອຈາກພຣະເຢຊູເຈົ້າ. ຄຳຮ້ອງຂໍຂອງພວກເຂົາຈຶ່ງເປັນຄຳຮ້ອງຂໍທີ່ມາຈາກໃຈ, ທີ່ເຕັມດ້ວຍຄວາມເຊື່ອໝັ້ນໃນພຣະເຢຊູເຈົ້າຜູ້ຈະສາມາດຊ່ວຍພວກເຂົາໃຫ້ຫາຍດີຈາກພະຍາດໄດ້. ຜ່ານທາງຄວາມເຊື່ອຂອງພວກເຂົານີ້, ພະຍາດຂອງພວກເຂົາຈຶ່ງໄດ້ຮັບການປິ່ນປົວຮັກສາ. ແຕ່ເພື່ອຈະກັບເຂົ້າມາສູ່ສັງຄົມໄດ້ນັ້ນ, ພວກເຂົາຈຳຕ້ອງໄດ້ຮັບການຮັບຮອງຢັ້ງຢືນຈາກພຣະສົງ. ດ້ວຍເຫດນີ້, ພຣະເຢຊູເຈົ້າຈຶ່ງບອກກັບຄົນຂີ້ທູດທັງສິບວ່າ: “ຈົ່ງໄປສຳແດງຕົວຕໍ່ພຣະສົງ”.

ເມື່ອຄົນຂີ້ທູດເຫລົ່ານີ້ໄດ້ຮັບການຮັກສາໃຫ້ຫາຍດີແລ້ວ, ພັດມີແຕ່ຄົນດຽວທີ່ກັບມາຂອບພຣະຄຸນພຣະເປັນເຈົ້າ. ແລະຄົນຂີ້ທູດນີ້ພັດແມ່ນຄົນຕ່າງສາດສະໜາອີກດ້ວຍ. ພຣະເຢຊູເຈົ້າຈຶ່ງກ່າວກັບເຂົາວ່າ: “ຄວາມເຊື່ອຂອງເຈົ້າໄດ້ຊ່ວຍເຈົ້າແລ້ວ”. ສ່ວນເກົ້າຄົນອື່ນນັ້ນເດ, ພວກເຂົາກໍມີຄວາມເຊື່ອ, ແຕ່ພວກເຂົາບໍ່ສະແດງຄວາມເຊື່ອນັ້ນອອກມາ, ດ້ວຍການຂອບພຣະຄຸນພຣະເປັນເຈົ້າ.

**ພາວະນາ**

ໂອພຣະເຢຊູເຈົ້າ, ໂຜດຊ່ວຍລູກໃຫ້ສຳນຶກໄດ້ວ່າຕົນເປັນຄົນຂີ້ທູດຝ່າຍວິນຍານ, ເປັນຄົນບາບ, ຄົນເປື້ອນໝອງ. ແລະໂຜດຊ່ວຍລູກໃຫ້ມີຄວາມປາດຖະໜາຢາກຫາຍດີຈາກພະຍາດນີ້ ດ້ວຍການຫັນມາຫາພຣະອົງແລະຮັບການປິ່ນປົວຈາກພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ